## ເປົ້າໝາຍ ແລະ ປະໂຫຍດຂອງ CLE ໃນການສ້າງຄວາມເຂັ້ມແຂງ

### 1.ນັກສຶກສາ

ເປັນການເປີດໂອກາດແກ່ນັກສຶກສາ ທີ່ຈະໄດ້ສັງເກດເຫັນ ຫຼື ໄດ້ປະສົບການໃນການເຮັດວຽກຕົວຈິງກັບການໃຊ້ຄວາມຮູ້ທາງດ້ານກົດໝາຍ, ລູກຄວາມ ຫຼື ລູກຄວາມທີ່ສົມມຸດຂຶ້ນ ຊຶ່ງຈະເຮັດໃຫ້ນັກສຶກສາໄດ້ຮຽນຮູ້ ແລະ ນຳໃຊ້ຄວາມຮູ້, ທັກສະ ແລະ ຄຸນຄ່າ ຈາກປະສົບການດັ່ງກ່າວ;

### 2.ຊຸມຊົນ

ສ້າງຄວາມເຂັ້ມແຂງໂດຍໃຫ້ການບໍລິການທາງດ້ານການກົດໝາຍແກ່ຜູ້ດ້ອຍໂອກາດທີ່ບໍ່ສາມາດເຂົ້າເຖິງການບໍລິການນີ້ໄດ້;

### 3.ນັກກົດໝາຍ

ພັດທະນາຈັນຍາທຳໃນການບໍລິການສັງຄົມ ແລະ ຄວາມຍຸຕິທຳໃນສັງຄົມແລະສ້າງພື້ນຖານໃຫ້ມີຄວາມຮັບຜິດຊອບທາງດ້ານວິຊາຊີບ

### 4.ອາຈານກົດໝາຍ

ເພື່ອເຮັດໃຫ້ອາຈານມີສ່ວນຮ່ວມໃນການພັດທະນາດ້ານວິຊາການໃນທັກສະ ແລະ ທິດສະດີໃນການປະກອບວິຊາຊີບທີ່ເຊື່ອມໂຍງລະຫວ່າງມະຫາວິທະຍາໄລ ແລະ ຜູ້ປະກອບວິຊາຊີບກົດໝາຍ

### 5. ລະບົບການສຶກສາ

ວິທີການສອນແບບມີສ່ວນຮ່ວມ ແລະ ສະທ້ອນຄືນ ສ້າງແຮງບັນດານໃຈໃຫ້ແກ່ນັກສຶກສາໃນການປະກອບວິຊາຊີບທາງດ້ານກົດໝາຍ ຊຶ່ງການບັນຍາຍ ແລະ ການອ່ານ ບໍ່ສາມາດເຮັດໃຫ້ບັນລຸຜົນໄດ້. ການຮຽນແບບສະທ້ອນຄືນ ຍັງເປັນວິທີການສອນທີ່ໄດ້ປະສິດທິຜົນທີ່ສຸດສຳລັບການຮຽນແບບຜູ້ໃຫຍ່.

### 6. ການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ແລະ ການເຂົ້າເຖິງຄວາມຍຸຕິທຳ ເພື່ອສັງຄົມ

## ວັນເວລາ ເປີດບໍລິການ

ເປີດ ວັນຈັນ-ສຸກ
ເວລາ 8:00-16:00 (ລັດຖະການ)

## ຊ່ອງທາງຕິດຕໍ່

ເບີໂທລະສັບ :030 9527538
ເຟສບຸກ:ສູນບໍລິການກົດໝາຍແກ່ປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລຈຳປາສັກ
ອີເມວ:FLACLE2021@gmail.com

## ສະຖານທີ່ຕັ້ງ

ສູນບໍລິການກົດໝາຍແກ່ປະຊາຊົນ
ຫ້ອງການໃຫ້ຄຳປຶກສາທາງດ້ານກົດໝາຍ

ອາຄານຕຶກ L3 ຊັ້ນທີ່ 1 ຂອງ ຄະນະນິຕິສາດ ແລະ ລັດຖະສາດ ,ມະຫາວິທະຍາໄລຈຳປາສັກ,ບ້ານຈັດສັນ,ນະຄອນປາກເຊ,ແຂວງຈຳປາສັກ

ແຜນທີ່: ສູນບໍລິການກົດໝາຍແກ່ປະຊາຊົນ ຂອງຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລຈຳປາສັກ




# ຄະນະນິຕິສາດ ແລະ ລັດຖະສາດ
# ສູນບໍລິການກົດໝາຍແກ່ປະຊາຊົນ

## ວິໄສທັດ

" ການເປັນແຫຼ່ງການຮຽນຮູ້, ເປັນສະຖານທີ່ຝຶກແອບວຽກງານຕົວຈິງໃຫ້ແກ່ນັກສຶກສາກົດໝາຍ ທີ່ມີຄຸນນະພາບ "

## ປະຫວັດຄວາມເປັນມາ

ການເຄື່ອນໄຫວກິດຈະກຳໃຫ້ຄວາມຮູ້ທາງດ້ານກົດໝາຍແກ່ປະຊາຊົນຢູ່ພາຍໃນ ຄະນະ ນິຕິສາດ ແລະ ລັດຖະສາດ ໄດ້ເລີ່ມເຄື່ອນແຕ່ປີ 2017 ເປັນຕົ້ນມາ ໂດຍການຮ່ວມມືກັນລະຫວ່າງ ຄະນະນິຕິສາດ ແລະ ລັດຖະສາດມະຫາວິທະຍາໄລ ຈຳປາສັກ ກັບ ອົງການແບັບຊີໂຄ. ມາຮອດວັນທີ 28 ກໍລະກົດ 2019 ໄດ້ເຊັນບົດບັນທຶກ ຄວາມເຂົ້າໃຈກັບອົງການແບັບຊີໂຄ (BABSEACLE) ວ່າດ້ວຍການຮ່ວມມືຊ່ວຍເຫຼືອດ້ານວິຊາການແລະສະໜັບສະໜູນງົບ ປະມານ ວັນທີ 18 ມັງກອນ 2021 ໄດ້ສ້າງຕັ້ງເປັນສູນບໍລິການກົດໝາຍແກ່ປະຊາຊົນ (FLACLE) ແລະ ໄດ້ເປີດນຳໃຊ້ຢ່າງເປັນທາງການ.

## ພາລະບົດບາດຂອງສູນ

ສູນບໍລິການກົດໝາຍແກ່ປະຊາຊົນ ແມ່ນການຈັດຕັ້ງໜຶ່ງທີ່ນອນໃນຄວາມຮັບຜິດຊອບຂອງ ຄະນະ ນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລຈຳປາສັກ. ມີພາລະບົດບາດ ໃນການຝຶກແອບນັກສຶກສາດ້ານການເຜີຍແຜ່ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນ ແລະ ເປັນສະຖານທີ່ຝຶກແອບດ້ານການເຄື່ອນໄຫວຕົວຈິງໃຫ້ແກ່ນັກສຶກສາທາດ້ານວິຊາການກົດໝາຍ, ການຮັບຮູ້ເຫດຜົນ ແລະ ການນຳໃຊ້ກົດໝາຍເຂົ້າໃນຕົວຈິງຂອງສັງຄົມໃຫ້ຄ່ອງແຄ້ວ ແລະ ມີປະສິດທິຜົນ.

## ໂຄງປະກອບບຸກຄະລາກອນຂອງສູນ

ເປົ້າໝາຍ ແລະ ປະໂຫຍດຂອງ CLE ໃນການສ້າງຄວາມເຂັ້ມແຂງ

ປະກອບມີ:

- ຫົວໜ້າສູນ 1 ທ່ານ
- ຮອງຫົວໜ້າສູນ 2 ທ່ານ
- ຄູ-ອາຈານ ແລະ ນັກສຶກສາອາສາສະໝັກປະຈຳສູນຈຳນວນໜຶ່ງ.

## 3 ໜ່ວຍງານ

01 ໜ່ວຍງານໃຫ້ຄຳປຶກສາທາງດ້ານກົດໝາຍ
02 ໜ່ວຍງານລົງໃຫ້ຄວາມຮູ້ທາງດ້ານກົດໝາຍ
03 ໜ່ວຍງານບໍລິຫານ

ຄະນະຮັບຜິດຊອບໃຫ້ຄຳປຶກສາກົດໝາຍປະກອບມີ

- ຫົວໜ້າຄະນະ 1 ທ່ານ
- ຮອງຫົວໜ້າຄະນະ 1 ທ່ານ
- ຄະນະໃນໜ່ວຍງານ 2 ທ່ານ




FLACLE

## ໜ່ວຍງານລົງໃຫ້ຄວາມຮູ້ທາງດ້ານກົດໝາຍ

ການລົງໃຫ້ຄວາມຮູ້ທາງດ້ານກົດໝາຍແມ່ນໜຶ່ງໃນພາລະບົດບາດຂອງສູນບໍລິການກົດໝາຍແກ່ປະຊາຊົນ ໄດ້ເຄື່ອນໄຫວໃນການລົງໃຫ້ຄວາມຮູ້ທາງດ້ານກົດໝາຍໃຫ້ແກ່ຊຸມຊົນເພື່ອເລັ່ງໃສ່ການຊຸກຍູ້ໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານທາງດ້ານກົດໝາຍ ,ຂະບວນການຍຸຕິທຳຢ່າງເທົ່າທຽມ ແລະ ທົ່ວເຖິງ. ແຕ່ປີ 2017 ຈົນຮອດປະຈຸບັນ ທາງສູນກໍໄດ້ລົງໃຫ້ຄວາມຮູ້ທາງດ້ານກົດໝາຍຢູ່ທີ່ສະຖານທີ່ການສຶກສາ, ໂຮງຮຽນສາມັນ, ນັກສຶກສາພາຍໃນຄະນະ, ຊຸມຊົນໃນບັນດາເມືອງ ໃນແຂວງຈຳປາສັກ.

## ໜ່ວຍງານໃຫ້ຄຳປຶກສາດ້ານກົດໝາຍແກ່ປະຊາຊົນ

ໜ່ວຍງານບໍລິການໃຫ້ຄຳປຶກສາທາງດ້ານກົດໝາຍແມ່ນໜ່ວຍງານໜຶ່ງຂອງສູນບໍລິການກົດໝາຍແກ່ປະຊາຊົນຂອງ ຄະນະນິຕິສາດ ແລະ ລັດຖະສາດມະຫາວິທະຍາໄລຈຳປາສັກ ດຳເນີນພາລະບົດບາດໃນການໃຫ້ຄຳປຶກສາກ່ຽວຂ້ອງກັບບັນຫາກົດໝາຍຕາມການຂໍຄວາມຊ່ວຍເຫຼືອຂອງປະຊາຊົນທີ່ຕ້ອງ ການຮູ້ກ່ຽວກັບວິທີການແກ້ໄຂ ແລະ ຂັ້ນຕອນຂອງການດຳເນີນຕາມທີ່ກົດໝາຍກຳນົດ.

